# **ກົດລະບຽບ ແລະ ເງື່ອນໄຂ**

**ການປະກວດ ຮູບພາບພ້ອມຂໍ້ຄວາມບັນລະຍາຍ ເນື່ອງໃນສັບປະດາ ຄວາມຮູ້ກ່ຽວກັບຢາຕ້ານເຊື້ອ** (Antibiotic Awareness Week), 13 ຫາ 19 ພະຈິກ 2017.


[ຄວາມເປັນມາ](#)
[ກ່ຽວກັບການປະກວດ](#)
[ຄຳແນະນຳ](#)
[ກົດລະບຽບຂອງການແຂ່ງຂັນ](#)
[ຂະບວນການ ແລະ ເງື່ອນໄຂ](#)
[ການຍອມຮັບ](#)
[ລາງວັນສຳລັບການແຂ່ງຂັນ](#)
[ຕົວຢ່າງ ເນື້ອໃນຂອງບົດບັນລະຍາຍຮູບພາບ](#)


## ຄວາມເປັນມາ

ອົງການອາຫານ ແລະ ການກະເສດ (FAO) ເປັນອົງການຈັດຕັ້ງໜຶ່ງ ຂອງອົງການສະຫະປະຊາຊາດ ທີ່ມີຄວາມຊ່ຽວຊານ ໃນດ້ານ ອາຫານ ແລະ ການກະສິກຳ ໂດຍມີເປົ້າຫມາຍ ໃນການລົບລ້າງຄວາມອຶດຫິວ ໃນທົ່ວໂລກ. FAO ມີສະມາຊິກທັງຫມົດ 194 ປະເທດ, ຫນຶ່ງອົງການສະມາຊິກ (ສະຫະພາບເອີຣົບ) ແລະ ສອງສະມາຊິກພາຄີ (ຫມູ່ເກາະ Faroe ແລະ Tokelau) ຢູ່ໃນອົງການຈັດຕັ້ງເຮັດວຽກຮ່ວມກັນ ເພື່ອບັນລຸຄວາມປອດໄພດ້ານອາຫານສໍາລັບທຸກຄົນ. ໜ້າທີ່ຕົ້ນຕໍ ຂອງ FAO ແມ່ນເພື່ອປັບປຸງດ້ານໂພຊະນາການ, ເພີ່ມຜົນຜະລິດກະສິກໍາ, ຍົກສູງຊີວິດການເປັນຢູ່ ຂອງປະຊາກອນໃນຊົນນະບົດ ແລະ ສົ່ງເສີມການເຕີບໂຕ ທາງດ້ານເສດຖະກິດໂລກ.

ໃນຂົງເຂດຄວາມຮັບຜິດຊອບຂອງຕົນ FAO ໄດ້ຜະລິດ ສິ່ງສື່ໂຄສະນາ ແລະ ຂໍ້ມູນຂ່າວສານ ທີ່ນຳໃຊ້ເພື່ອຍົກລະດັບຄວາມຮູ້ ບັນຫາທີ່ສຳຄັນ ກ່ຽວຂ້ອງກັບ ອາຫານ ແລະ ການກະສິກຳ ແລະ ເພື່ອບັນລຸເປົ້າຫມາຍຂອງການລົບລ້າງ ຄວາມອຶດຫິວຂອງໂລກ. ອຸປະກອນການສື່ສານຂອງ FAO ມີຢູ່ ໃນຫລາຍພາສາ ແລະ ຖືກແຈກຢາຍໃນທົ່ວໂລກ ໂດຍບໍ່ເສຍຄ່າ ແລະ ບໍ່ເພື່ອຈຸດປະສົງທາງການຄ້າ. ຕົວຢ່າງ ອຸປະກອນ ເຫຼົ່ານີ້ ສາມາດພົບໄດ້ ຢູ່ໃນເວັບໄຊທ໌ຂອງ FAO: www.fao.org

ສັບປະດາ (ອາທິດ) ແຫ່ງການປູກຈິດສຳນຶກ ຈັດໂດຍການຮ່ວມມື ລະຫວ່າງ ອົງການອາຫານ ແລະ ການກະເສດ(FAO), ອົງການສຸຂະພາບສັດສາກົນ(OIE) ແລະ ອົງການອະນາໄມໂລກ(WHO). ການສະເຫຼີມສະຫຼອງ ລະດັບພາກພື້ນຈະຈັດຂຶ້ນ ທີ່ ຫ້ອງການອົງການອາຫານ ແລະ ການກະເສດ ປະຈຳພາກພື້ນ ອາຊີ ແລະ ປາຊີຟິກ (FAO RAP) ທີ່ ບາງກອກ ລະຫວ່າງວັນທີ 13-19/1 1/ 2017. ຮູບພາບທີ່ຊະນະໃນລະດັບປະເທດອາດຈະນຳໄປວາງສະແດງຢູ່ໃນງານດັ່ງກ່າວ.

## ກ່ຽວກັບການປະກວດ

ການປະກວດຮູບພາບພ້ອມບົດບັນລະຍາຍ ຈັດຂຶ້ນໂດຍການເຊື່ອມໂຍງກັບສັບປະດາການຮັບຮູ້ກ່ຽວກັບຢາຕ້ານເຊື້ອ ປະຈຳປີ 2017 ພາຍໃຕ້ຄຳຂວັນ ***"ການປະຕິບັດທີ່ດີເພື່ອກ້າວໄປສູ່ປອດການຕິດເຊື້ອ"***. ການແຂ່ງຂັນປະກວດບົດເລື່ອງສັ້ນ/ບົດບັນລະຍາຍຮູບພາບ ແມ່ນເພື່ອເພີ່ມຄວາມຮູ້ກ່ຽວກັບການດື້ຕໍ່ຢາຕ້ານເຊື້ອຂອງເຊື້ອຈຸລິນຊີ (AMR) ແລະ ຄວາມສ່ຽງຂອງມັນ. ພ້ອມກັນນີ້ ມັນຍັງມີຈຸດປະສົງເພື່ອສົ່ງເສີມ ການປະຕິບັດທີ່ດີ ໃນ ການລ້ຽງສັດ ແລະ ການລ້ຽງສັດນ້ຳ. ບັນດາຮູບພາບ ທີ່ສົ່ງເຂົ້າແຂ່ງຂັນຕ້ອງເນັ້ນຫນັກໃຫ້ເຫັນ ການປະຕິບັດທີ່ດີ ໃນການຜະລິດກະສິກຳ ທີ່ຈະຊ່ວຍຫຼຸດຜ່ອນການລະບາດຂອງ AMR.

ໃນການສະເຫຼີມສະຫລອງ ສັບປະດາການຮັບຮູ້ກ່ຽວກັບຢາຕ້ານເຊື້ອ ປະຈຳປີ 2017 ຫ້ອງການພາກພື້ນສຳລັບອາຊີແລະປາຊີຟິກ (FAO RAP) ຂອງອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ ໄດ້ເປີດການແຂ່ງຂັນ ຮູບພາບພ້ອມບົດບັນລະຍາຍ ເປັນຄັ້ງທຳອິດໃນອາຊີ ພາຍໃຕ້ຫົວຂໍ້ດຽວກັນໃນທົ່ວໂລກ ***ການປະຕິບັດດ້ານການກະສິກຳທີ່ດີ ເພື່ອປ້ອງກັນ ແລະ ຄວບຄຸມການຕິດເຊື້ອ.***

ສິ່ງທ້າທາຍແມ່ນ ເພື່ອສະແດງໃຫ້ເຫັນປະເດັນ ***ການປະຕິບັດດ້ານການກະສິກຳທີ່ດີ*** ທີ່ເປັນການປ້ອງກັນ ແລະ ຄວບຄຸມການຕິດເຊື້ອ ໂດຍນຳໃຊ້ກ້ອງຖ່າຍຮູບ ແລະ ເລື່ອງເລົ່າຂອງທ່ານ. ສິ່ງສຳຄັນແມ່ນຕ້ອງສົ່ງສະ ແດງໃຫ້ເຫັນເຖິງວິທີປະຕິບັດການປະຕິບັດທີດີ ທີ່ເປັນການປະກອບສ່ວນໃນການນຳໃຊ້ຢາຕ້ານເຊື້ອຢ່າງລະມັດລະວັງ ໂດຍສະເພາະການນຳໃຊ້ຢາຕ້ານເຊື້ອໃນການກະສິກຳ.

## ຄຳແນະນຳ

1. ການປະກວດຮູບພາບແມ່ນເປີດໃຫ້ທຸກຄົນ ລວມທັງຜູ້ທີ່ຫລົງໄຫລໃນການຖ່າຍພາບ, ຊາວກະສິກອນຜູ້ລ້ຽງສັດ, ຜູ້ປະຕິບັດການກະສິກຳ, ນັກສຶກສາສັດຕະວະແພດ, ອົງການຈັດຕັ້ງ ແລະ ອື່ນໆ. ພະນັກງານຂອງ ອົງການ FAO, ລູກຈ້າງ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າແມ່ນບໍ່ມີສິດເຂົ້າຮ່ວມໃນການແຂ່ງຂັນນີ້.
2. ຮູບພາບທັງຫມົດຕ້ອງສົ່ງໃນໄລຍະເວລາການແຂ່ງຂັນ - **ວັນທີ 4 ກັນຍາ ຫາ 13 ຕຸລາ 2017** ແລະ ສົ່ງໄປທາງອີເມວ ທີ່: : Lattanaphone.Thammavong@fao.org ຫົວຂໍ້: AAW Contest. ຜູ້ໜຶ່ງອະນຸຍາດສົ່ງໄດ້ຫຼາຍລາຍການ.
3. ຮູບພາບ ແລະ ບົດເລື່ອງທີ່ມານຳກັນ ຈະຕ້ອງບໍ່ຖືກເຜີຍແຜ່ມາກ່ອນຫນ້ານີ້ ລວມທັງ ຢູ່ໃນ ອິເຕີເນັດ ຫຼື ການຕີພິມ.
4. ການສົ່ງເຂົ້າແຂ່ງຂັນ ຈະຕ້ອງສົ່ງຮູບພາບ ແລະ ບົດບັນລະຍາຍ ໃນ PDF.
5. ອະນຸຍາດໃຫ້ປັບແຕ່ງຮູບພາບໄດ້ພຽງເລັກນ້ອຍເທົ່ານັ້ນ (ເຊັ່ນ: ການຕັດຂອບອອກ/cropping, ການປັບປຸງແສງ ແລະ ການປັບຄວາມເຂັ້ມ-contrast) ໂດຍການນຳໃຊ້ ແອບໃນໂທລະສັບ.
6. ບົດບັນລະຍາຍຮູບພາບ ຈະຕ້ອງ ເນັ້ນໃສ່ ການປະຕິບັດທາງການລ້ຽງສັດ ທີ່ອາດຈະປະກອບສ່ວນໃນການຫຼຸດຜ່ອນການດື້ (ຕ້ານ) ຕໍ່ຢາຂອງເຊື້ອຈຸລິນຊີ -AMR (ໃຫ້ເບິ່ງຕົວຢ່າງຫົວຂໍ້ຂອງບົດຂ້າງລຸ່ມນີ້). ບົດເລື່ອງຢ່າງນ້ອຍຕ້ອງປະກອບມີ 200 ຄຳຂຶ້ນເມືອ.
7. ຫ້ອງການ ສູນສຸກເສີນກ່ຽວກັບພະຍາດຂ້າມຊາຍແດນຂອງ ອົງການອາຫານ ແລະ ການກະເສດ (FAO ECTAD Country Office) ຈະເປັນຜູຄັດເລືອກເອົາ ສາມ ຜູ້ຊະນະ ໃນລະດັບປະເທດ. ຫຼັງຈາກນັ້ນ

ຜູ້ທີ່ຊະນະ ໃນລະດັບປະເທດ ທັງສາມ ສົ່ງເຂົ້າແຂ່ງຂັນ ໃນລະດັບພາກພື້ນ ຊຶ່ງຈະເລືອກເອົາຜູ້ຊະນະເລີດ 1 ລາງວັນ.

8. ຜູ້ເຂົ້າຮ່ວມແຂ່ງຂັນຕ້ອງ ອ່ານ ແລະ ຍອມຮັບຂໍ້ກຳນົດ ແລະ ເງື່ອນໄຂຂອງການແຂ່ງຂັນນີ້.
9. ລາຍຊື່ຜູ້ຖືກຄັດເລືອກຈຳນວນໜຶ່ງ ອາດໄດ້ຮັບການຕິດຕໍ່ໃຫ້ສົ່ງຮູບພາບເພີ່ມເຕີມ ທີ່ມີຄວາມຫລະອຽດຂອງພາບ 300 dpi ຂຶ້ນເມືອ.
10. ຮູບພາບ ທີ່ໄດ້ຮັບຄະແນນ ສູງສຸດ ສາມລາຍການ ຈະຖືກນຳສະເຫນີ ແລະ ຈັດພິມມາຢູ່ໃນເວັບໄຊທ໌ຂອງ FAO ລວມທັງ ຊື່, ປະຫວັດຫຍໍ້ ຂອງຊ່າງພາບ ແລະ ຮູບພາບ ແລະ ບົດບັນລະຍາຍ ທີ່ຊະນະການແຂ່ງຂັນ.
11. ການປະກາດຜູ້ຊະນະ ຈັດຂຶ້ນໃນວັນທີ 2 ເດືອນພະຈິກປີ 2017.

## ກົດລະບຽບຂອງການແຂ່ງຂັນ

ການແຂ່ງຂັນແມ່ນເປີດໃຫ້ບຸກຄົນທົ່ວໄປ ຜູ້ທີ່ມີອາຍຸ 18 ປີ ບໍລິບູນ ໃນເວລາສົ່ງເຂົ້າປະກວດ. ພະນັກງານຂອງ FAO ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ (ຄູ່ສົມລົດ, ພໍ່ແມ່, ລູກ, ອ້າຍນ້ອງ ແລະ ຜົວ ຫລື ເມຍ, ບໍ່ວ່າພວກເຂົາອາໃສຢູ່ບ່ອນໃດກໍ່ຕາມ) ຫຼື ຜູ້ທີ່ຢູ່ໃນຄົວເຮືອນດຽວກັນຂອງບຸກຄົນເຫຼົ່ານັ້ນ ແມ່ນບໍ່ມີສິດເຂົ້າໃນການແຂ່ງຂັນ. FAO ຈະກຳນົດການມີສິດໃນການຕັດສິນໃຈຂອງຕົນເອງ.

ຜູ້ສົ່ງເຂົ້າແຂ່ງຂັນສາມາດສົ່ງຜົນງານ (ຮູບພາບ) ທີ່ແມ່ນຕົ້ນສະບັບທີ່ຕົນເອງເປັນຜູ້ສ້າງ ແລະ ເປັນເຈົ້າຂອງລິຂະສິດ. ຖ້າຮູບຖ່າຍມີຮູບພາບຂອງບຸກຄົນອື່ນ ຕ້ອງໄດ້ຮັບການອະນຸຍາດຈາກບຸກຄົນດັ່ງກ່າວກ່ອນ ສົ່ງເຂົ້າໃນການແຂ່ງຂັນ, ແລະ ອະນຸຍາດໃຫ້ FAO ນຳໃຊ້ຮູບພາບດັ່ງກ່າວ ເພື່ອຈຸດປະສົງຂອງຕົນ ຕາມທີ່ໄດ້ກຳນົດໄວ້ຂ້າງລຸ່ມນີ້. FAO ຈະບໍ່ຂໍອະນຸຍາດເພີ່ມເຕີມ ໃນການນຳໃຊ້ຮູບພາບດັ່ງກ່າວ ແລະ ຈະບໍ່ຮັບຜິດຊອບຕໍ່ການຮ້ອງຂໍ ຫຼື ຄຳຮ້ອງຟ້ອງໃດໆ, ຫຼື ທຸກການກ່າວຫາ ໃນກໍລະນີເປັນການລະເມີດສິດທິຂອງບຸກຄົນທີສາມ.

ໃນການເຂົ້າຮ່ວມການແຂ່ງຂັນ, ຜູ້ເຂົ້າຮ່ວມຈະຕ້ອງມອບສິດຂາດຕົວໃຫ້ ອົງການ FAO ໃນ ການ ຜະລິດ, ແຈກຢາຍ, ວາງສະແດງ ແລະ ສ້າງເປັນງານໃໝ່ ທີ່ກ່ຽວຂ້ອງກັບບົດຂຽນ (ພ້ອມກັບຊື່ສິນເຊື່ອ) ທີ່ກ່ຽວຂ້ອງກັບການແຂ່ງຂັນ ແລະ ການສົ່ງເສີມວຽກງານຂອງ FAO, ເຊັ່ນ:

- ນຳໃຊ້ໃນເວັບໄຊທ໌ຂອງອົງການ FAO: www.fao.org
- ຜະລິດເປັນວິດີໂອ ຫຼື ບັນທຶກດິຈິຕອນ ເພື່ອສະແດງຜົນງານຂອງອົງການຈັດຕັ້ງ;
- ສ້າງສິ່ງພິມ ຂອງອົງການ FAO, ປຶ້ມຄູ່ມື ຫຼື ໂປສເຕີ;
- ອອກທາງສື່ສັງຄົມອອນລາຍນ໌, ລວມທັງເປັນການສົ່ງເສີມການແຂ່ງຂັນດ້ວຍໂຕຂອງມັນເອງ;
- ສື່ອື່ນໆທີ່ FAO ໃຊ້ເຂົ້າໃນການສື່ສານ.

FAO ຈະບໍ່ຈ່າຍຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍໃດໆ ທີ່ກ່ຽວຂ້ອງ ກັບການສົ່ງຮູບເຂົ້າປະກວດ ແຂ່ງຂັນ ຫຼື ການນຳໃຊ້ດັ່ງທີ່ໄດ້ອະທິບາຍຂ້າງເທິງ.

FAO ຂໍສະຫງວນສິດ ທີ່ຈະພິຈາລະນາ ການມີສິດໄດ້ຮັບ ການເຂົ້າ ແລະ/ຫຼື ການເຂົ້າຮ່ວມ (ລວມທັງຕົວຕົນ ແລະ ທີ່ຢູ່ຂອງຜູ້ເຂົ້າຮ່ວມ) ແລະ ຕັດສິດເຂົ້າແຂ່ງຂັນ ຕໍ່ສິ່ງທີ່ສົ່ງເຂົ້າມາ ທີ່ບໍ່ສອດຄ່ອງກັບກົດລະບຽບເຫຼົ່ານີ້ ຫຼື ຕໍ່ຜູ້ທີ່ມີການກະກະທຳໃດໆ ເປັນການປະພຶດບໍ່ສອດຄ່ອງ ກັບຂະບວນການເຂົ້າແຂ່ງຂັນ. ໃນການສົ່ງຜົນງານເຂົ້າໃນການແຂ່ງຂັນ, ຜູ້ສົ່ງ ຕ້ອງເຂົ້າໃຈ ແລະ ເຫັນດີວ່າ ຂໍ້ມູນສ່ວນບຸກຄົນ ໂດຍສະເພາະແມ່ນ ຊື່ ແລະ ທີ່ຢູ່ ຕົນເອງ ອາດຈະຖືກນຳໄປສົ່ງຕໍ່, ແລກປ່ຽນ ກັບຄົນອື່ນ ແລະ

ຖືກນຳໃຊ້ເຂົ້າໃນຈຸດປະສົງ ຂອງການແຂ່ງຂັນ ແລະ ໃນຈຸດປະສົງອື່ນໆ ທີ່ລະບຸໄວ້ໃນ ກົດລະບຽບ ແລະ ເງື່ອນໄຂຂອງການປະກວດສະບັບນີ້.

ຂໍ້ມູນຕ່າງໆ ອາດຈະຖືກນຳໃຊ້ໂດຍ FAO ເພື່ອກວດສອບເອກະລັກຂອງ ຜູ້ສົ່ງ, ທີ່ຢູ່ທາງໄປສະນີ ແລະເບີໂທລະສັບ ຫຼື ເພື່ອຢືນຢັນ ການມີສິດໄດ້ຮັບລາງວັນ ຂອງຜູ້ເຂົ້າຮ່ວມໃນການແຂ່ງຂັນ. FAO ບໍ່ມີຄວາມຮັບຜິດຊອບຕໍ່ບັນດາ ຮູບພາບທີ່ບໍ່ໄດ້ຮັບ (ສົ່ງມາບໍ່ຮອດ) ຍ້ອນການ ຜິດພາດ ຂອງອິນເຕີເນັດ ຫຼື ຊອບແວ.

ບໍ່ມີສິ່ງໃດໃນກົດລະບຽບສຳລັບການແຂ່ງຂັນນີ້ຈະຖືວ່າເປັນການຍົກເວັ້ນ ບໍ່ວ່າຈະເປັນການກະທຳ ຫຼື ຄຳເວົ້າ ລວມທັງການສະແດງອອກຢ່າງຈະແຈ້ງ ຫຼື ໂດຍການບອກໃບ້ ທີ່ສະແດງເຖິງສິດທິພິເສດ ແລະ ຂໍ້ຍົກເວັ້ນ ຂອງອົງການອາຫານ ແລະ ການກະເສດ.

## ຂະບວນການ ແລະ ເງື່ອນໄຂ

ການແຂ່ງຂັນ ລະດັບພາກພື້ນ ຈະເປີດໃນ ເວລາ 12:00 ໂມງ ທ່ຽງວັນ ເວລາກຸງເທບ (ເວລາອິນດູຈີນ) ໃນວັນທີ 4 ກັນຍາ 2017 ແລະ ປິດເວລາ 12:00:00 ຕອນທ່ຽງ (ເວລາອິນດູຈີນ) ໃນວັນທີ 13 ຕຸລາ 2017. ບັນດາລາຍການທີ່ໄດ້ຮັບພາຍຫຼັງເວລາທີ່ກຳນົດ ຈະບໍ່ໄດ້ຮັບການພິຈາລະນາ.

ຫຼັງຈາກເວລາທີ່ກຳນົດສົ່ງເຂົ້າແຂ່ງຂັນ ສິ້ນສຸດລົງ, FAO ຈະຄັດເລືອກ 5 ຮູບພາບ ພ້ອມດ້ວຍບົດຂຽນ ທີ່ດີທີ່ສຸດ ແລະ ທີ່ໄດ້ຮັບ ພາຍໃນໄລຍະເວລາກຳນົດ ແລະ ຖືກຕ້ອງ ຕາມເງື່ອນໄຂດັ່ງຕໍ່ໄປນີ້: ຕົ້ນສະບັບ, ຄວາມກ່ຽວຂ້ອງກັບຫົວຂໍ້ (ການສະແດງເຖິງ ການປະຕິບັດທີ່ດີ ໃນການລ້ຽງສັດ ຫຼື ການຜະລິດກະສິກຳ ແລະ ທີ່ເປັນວິທີການປະກອບສ່ວນໃນການຫຼຸດຜ່ອນ AMR), ຄຸນຄ່າທາງສິນລະປະ ແລະ ການສື່ສານເຖິງ (ຄວາມໝາຍຂອງມັນ).

5 ຮູບພາບ ທີ່ຖືກເລືອກ ຈະສົ່ງໄປຫາ ຄະນະກຳມະການ ທີ່ປະກອບດ້ວຍ 3 ທ່ານ ຈາກ FAO (ປະຈຳປະເທດ ແລະ ປະຈຳພາກພື້ນ) ແລະ ຈາກພາກລັດຖະບານ ເພື່ອຄັດເລືອກ ເອົາ 3 ຈາກ 5 ພາບ ທີ່ເຫັນວ່າ ໃກ້ຄຽງກັບ ເງື່ອນໄຂກຳນົດຫຼາຍທີ່ສຸດ.

ພາຍຫຼັງຄັດເລືອກແລ້ວ ຜູ້ຊະນະຈະໄດ້ຮັບແຈ້ງການໂດຍທາງອີເມລ໌ ໂດຍໃຊ້ລາຍລະອຽດ ຕາມທີ່ຢູ່ແນບມາກັບ ຜົນງານສົ່ງເຂົ້າແຂ່ງຂັນ. ໃນກໍລະນີທີ່ຜູ້ທີ່ໄດ້ຮັບການຄັດເລືອກເປັນຜູ້ໄດ້ຮັບລາງວັນໃດ ລາງວັນໜຶ່ງ ບໍ່ສາມາດ ຕິດຕາມ ຫຼື ຕິດຕໍ່ບໍ່ໄດ້ ພາຍໃນ 10 ວັນ ຕາມການແຈ້ງເຕືອນ ຕໍ່ຜູ້ທີ່ຊະນະ ຕາມລະບຽບຂອງການແຂ່ງຂັນທີ່ໄດ້ລະບຸໄວ້ຂ້າງເທິງ, ຫຼື ຜູ້ກ່ຽວປະຕິເສດບໍ່ຮັບລາງວັນ, ລາງວັນຈະຖືກຍົກເລີກ ແລະ ຈະຢູ່ໃນການພິຈາລະນາຂອງຄະນະກຳມະການ ທີ່ຈະເອົາລາງວັນໃຫ້ກັບຄົນອື່ນທີ່ມີສິດໄດ້ຮັບ.

## ການຍອມຮັບ

ໂດຍການສົ່ງຮູບພາບ ແລະ ບົດບັນລະຍາຍ ເຂົ້າໃນການແຂ່ງຂັນ, ຜູ້ເຂົ້າຮ່ວມຕ້ອງຢືນຢັນວ່າ ກົດລະບຽບສຳລັບການແຂ່ງຂັນ ຕາມທີ່ໄດ້ກຳນົດໄວ້ຂ້າງເທິງ, ໄດ້ອ່ານ, ເຂົ້າໃຈ ແລະ ຕົກລົງເຫັນດີ ນຳທຸກປະການ.

## ລາງວັນສຳລັບການແຂ່ງຂັນ

**ລາງວັນສຳລັບຜູ້ຊະນະເລີດ ລະດັບພາກພື້ນ 1 ລາງວັນ** ຈະປະກອບມີ : ຄ່າເດີນທາງ ໄປ-ກັບ, ຄ່າທີ່ພັກ ແລະ ອັດຕາກິນ ຕາມອັດຕາມາດຕະຖານຂອງອົງການສະຫະປະຊາຊາດ ເພື່ອເຂົ້າຮ່ວມສະເຫຼີມສະຫຼອງ ສັບປະດາຄວາມຮູ້ກ່ຽວກັບຢາຕ້ານເຊື້ອ ໃນວັນທີ 13 ພະຈິກ 2017 ທີ່ຫ້ອງການ FAO RAP ປະຈຳພາກພື້ນ ທີ່ບາງກອກ.

**ລາງວັນສຳລັບຜູ້ຊະນະເລີດ ລະດັບປະເທດ** ຈະປະກອບມີດັ່ງຕໍ່ໄປນີ້:

- ລາງວັນທີ 1: 1 ລາງວັນ ກ້ອງຖ່າຍຮູບ Fujifilm instax mini ແລະ ໃບຢັ້ງຢືນການເຂົ້າຮ່ວມ;
- ລາງວັນທີ 2: 1 ລາງວັນ ຂອງທີ່ລະນຶກຈາກ ອົງການສະຫະປະຊາຊາດ ແລະ ໃບຢັ້ງຢືນການເຂົ້າຮ່ວມ;
- ລາງວັນທີ 3: 1 ລາງວັນ ຂອງທີ່ລະນຶກຈາກ ອົງການອາຫານແລະ ການກະເສດ ແລະ ໃບຢັ້ງຢືນການເຂົ້າຮ່ວມ.

## ຕົວຢ່າງ ເນື້ອໃນຂອງປຶດບັນລະຍາຍຮູບພາບ

- **ການປະຕິບັດມາດຕະການຄວາມປອດໄພທາງຊີວະ** * ການຈຳກັດ/ຄວບຄຸມການເຂົ້າ-ອອກ * ການຄວບຄຸມແມງໄມ້/ພາຫະນຳເຊື້ອ * ການພັກຄອກ, ການອະນາໄມ ແລະ ຂ້າເຊື້ອ * ການແຍກປ່ຽວ * ມາດຕະການຕໍ່ການຳສັດເຂົ້າມາໃໝ່ (ການແຍກປ່ຽວ, ເຂົ້າໝົດ-ອອກໝົດ) * 3 - ເຂດຄວາມປອດໄພທາງຊີວະ *
- **ມາດຕະການປະຈຳວັນ** * ການຕິດຕາມຄຸນນະພາບນ້ຳ (ການລ້ຽງສັດນ້ຳ) * ການຄຸ້ມຄອງ ແລະ ນຳໃຊ້ຢາຕ້ານເຊື້ອ ຢ່າງເໝາະສົມ(ອຸນະພູມ, ມາກ່ອນ - ໝົດກ່ອນ) ..... ) * ການກວດຄຸນນະພາບຢາ, ອາຫານ ແລະ ນ້ຳ * ການກວດສຸຂະພາບສັດປະຈຳໂດຍຜູ້ຊ່ຽວຊານ * ນຳໃຊ້ພັນພື້ນເມືອງ/ທົນທານຕໍ່ພະຍາດ * ກວດຫາຄວາມອ່ອນໄຫວຕໍ່ຢາຕ້ານເຊື້ອກ່ອນຂຽນໃບສັ່ງຢາ * ການຮສະໜອງນ້ຳສະອາດຕະຫຼອດເວລາ * ມີການບັນທຶກປະຈຳວັນທີ່ດີ * ການບົ່ງມະຕິພະຍາດທີ່ອ່ອງໄວ * ການສັງເກດໄລຍະເວລາຖ່າຍເທຂອງຢາຕ້ານເຊື້ອ * ຮູ້ແຫຼ່ງຂໍ້ມູນທີ່ຊັດເຈນ (ຫ້ອງວິໄຈ ຫາ ຟາມ/ສວພ) *
- **ການນຳໃຊ້ສິ່ງທົດແທນ** * Probiotics * ນຳໃຊ້ຢາພື້ນເມືອງ *
- **ການປັບປຸງພື້ນຖານໂຄງລ່າງ** * ລະບົບລະບາຍອາກາດ *
- **ການປ້ອງກັນພະຍາດ** * ມີແຜນສັກຢາກັນພະຍາດທີ່ດດີ * ແຜນສ້າງຄວາມຄຸ້ມກັນໃຫ້ຝູງສັດ *
- **ການຈັດການສິ່ງເສດເຫຼືອ** * ການກຳຈັດຕະກອນ * ການຈັດການກັບສິ່ງເສດ * ການກຳຈັດຢາຕ້ານເຊື້ອທີ່ບໍ່ໄດ້ນຳໃຊ້/ ໝົດອາຍຸ *
- **ການຄວບຄຸມສະພາບແວດລ້ອມ** * ນິຕິກຳ, ລະບຽບການ ຂໍ້ແນະນຳຕ່າງໆ * ການປະງານງານລະຫວ່າງພາກລັດ ແລະ ເອກະຊົນ ໃນການກັບຫຼັກການປະຕິບັດທີ່ດີ * ການຫຼຫາຖານກ່ຽວກັບການປະຕິບັດທີ່ດີ; ຜົນປະໂຫຍດຂອງການປະຕິບັດທີ່ດີ * ການບໍລິການດ້ານສັດຕະວະແພດທີ່ເຊື່ອຖືໄດ້